ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການລະດັບຊາດ
ເພື່ອການຫັນເປັນດິຈິຕອນ ຂອງ ສປປ ລາວ

ເລກທີ 002 /ຄຊດລ
ນະຄອນຫຼວງວຽງຈັນ, ວັນທີ 04 ມັງກອນ 2024

# ຄຳແນະນຳຈັດຕັ້ງປະຕິບັດ
# ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ຄະນະກຳມະການລະດັບຊາດ ເພື່ອການຫັນເປັນດິຈິຕອນ ຂອງ ສປປ ລາວ

- ອີງຕາມ ລັດຖະດຳລັດ ວ່າດ້ວຍ ການແຕ່ງຕັ້ງຄະນະກຳມະການລະດັບຊາດ ເພື່ອການຫັນເປັນດິຈິຕອນ ຂອງ ສປປ ລາວ ສະບັບເລກທີ 082/ປປທ, ລົງວັນທີ 02 ມິຖຸນາ 2023.
- ອີງຕາມ ດຳລັດ ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ຄະນະກຳມະການລະດັບຊາດ ເພື່ອການຫັນເປັນດິຈິຕອນ ຂອງ ສປປ ລາວ ສະບັບເລກທີ 301/ນຍ, ລົງວັນທີ 31 ຕຸລາ 2023.

## ຄະນະກຳມະການລະດັບຊາດ ເພື່ອການຫັນເປັນດິຈິຕອນ ຂອງ ສປປ ລາວ ອອກຄຳແນະນຳ:

### I. ຈຸດປະສົງ

1. ເພື່ອຜັນຂະຫຍາຍເນື້ອໃນ ຂອງ ດຳລັດ ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ຄະນະກຳມະການລະດັບຊາດ ເພື່ອການຫັນເປັນດິຈິຕອນ ຂອງ ສປປ ລາວ ສະບັບເລກທີ 301/ນຍ, ລົງວັນທີ 31 ຕຸລາ 2023 ໃຫ້ເປັນອັນລະອຽດ, ຈະແຈ້ງ, ຊັດເຈນ ແລະ ເປັນເອກະພາບໃນການຈັດຕັ້ງປະຕິບັດໃນຂອບເຂດທົ່ວປະເທດ;
2. ເພື່ອແນະນຳ, ອະທິບາຍເພີ່ມເຕີມ ກ່ຽວກັບ ວຽກງານການຫັນເປັນດິຈິຕອນ ຂອງ ສປປ ລາວ;
3. ເພື່ອສົ່ງເສີມ ວຽກງານການຫັນເປັນດິຈິຕອນຢູ່ແຕ່ລະຂົງເຂດ ແລະ ແຕ່ລະທ້ອງຖິ່ນ ໃນຂອບເຂດທົ່ວປະເທດ.

### II. ການຈັດຕັ້ງປະຕິບັດເນື້ອໃນດຳລັດ

1. **ໜ້າທີ່ຂອງບັນດາກະຊວງ ແລະ ແຂວງ ທີ່ລະບຸໄວ້ໃນ ໝວດທີ 2 ມາດຕາ 3**

ບັນດາກະຊວງ, ອົງການທຽບເທົ່າຢູ່ສູນກາງ ແລະ ບັນດາອົງການປົກຄອງທ້ອງຖິ່ນ, ລວມທັງ ບັນດາອົງການພັກ, ແນວລາວສ້າງຊາດ, ສະພາແຫ່ງຊາດ, ສະຫະ ພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ ຈະຕ້ອງໄດ້ຈັດຕັ້ງປະຕິບັດ ຍຸດທະສາດ, ນະໂຍບາຍ, ແຜນງານ ແລະ ບັນດາໂຄງການ ກ່ຽວກັບການຫັນເປັນດິຈິຕອນ ຂອງ ສປປ ລາວ, ເປັນຕົ້ນແມ່ນ ການພັດທະນາລັດຖະບານດິຈິຕອນ, ເສດຖະກິດດິຈິຕອນ ແລະ ສັງຄົມດິຈິຕອນ ໂດຍຕ້ອງສ້າງເປັນແຜນການຫັນເປັນດິຈິຕອນ ຂອງແຕ່ລະຂະແໜງການ ແລະ ທ້ອງຖິ່ນ.

ບັນດາກະຊວງ, ອົງການທຽບເທົ່າຢູ່ສູນກາງ ແລະ ບັນດາອົງການປົກຄອງທ້ອງຖິ່ນ, ລວມທັງ ບັນດາອົງການພັກ, ແນວລາວສ້າງຊາດ, ສະພາແຫ່ງຊາດ, ສະຫະ ພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ ຈະຕ້ອງໄດ້ຕິດຕາມ,

ກວດກາ, ຊຸກຍູ້ ການຈັດຕັ້ງປະຕິບັດວຽກງານການຫັນເປັນດີຈີຕອນ, ບັນດາເນື້ອໃນທີ່ລະບຸໃນ ວິໄສທັດການພັດທະນາເສດຖະກິດດີຈີຕອນ ແຫ່ງຊາດ ໄລຍະ 20 ປີ (2021-2040), ຍຸດທະສາດການພັດທະນາເສດຖະກິດດີຈີຕອນ ແຫ່ງຊາດ ໄລຍະ 10 ປີ (2021-2030) ແລະ ແຜນພັດທະນາເສດຖະກິດດີຈີຕອນ ແຫ່ງຊາດ ໄລຍະ 5 ປີ (2021-2025) ຕິດພັນກັບຂະແໜງການ ແລະ ທ້ອງຖິ່ນຕົນ.

2. **ຂອບເຂດສິດ ທີ່ລະບຸໃນ ໝວດທີ 2 ມາດຕາ 4**

ການແຕ່ງຕັ້ງຄະນະຮັບຜິດຊອບຫັນເປັນດີຈີຕອນ ຢູ່ບັນດາກະຊວງ, ອົງການທຽບເທົ່າຢູ່ສູນກາງ ແລະ ບັນດາອົງການປົກຄອງທ້ອງຖິ່ນ, ລວມທັງ ບັນດາອົງການພັກ, ແນວລາວສ້າງຊາດ, ສະພາແຫ່ງຊາດ, ສະຫະ ພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ ແມ່ນປະຕິບັດ ດັ່ງນີ້:

2.1 ບັນດາກະຊວງ, ອົງການທຽບເທົ່າ, ລວມທັງ ບັນດາອົງການພັກ, ແນວລາວສ້າງຊາດ, ສະພາແຫ່ງຊາດ, ສະຫະ ພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ ຢູ່ສູນກາງ ແຕ່ງຕັ້ງຄະນະຮັບຜິດຊອບການຫັນເປັນດີຈີຕອນຂອງຕົນເອງ ໂດຍກຳນົດເອົາ ເຈົ້າກະຊວງ, ລັດຖະມົນຕີ ຫຼື ຫົວໜ້າອົງການທຽບເທົ່າ ເປັນປະທານ, ຮອງລັດຖະມົນຕີ ຫຼື ຮອງຫົວໜ້າອົງການທຽບເທົ່າ ເປັນຮອງປະທານ ແລະ ປະກອບດ້ວຍຫົວໜ້າບັນດາກົມທີ່ກ່ຽວຂ້ອງ ເປັນຄະນະ.

2.2 ບັນດາແຂວງ ແລະ ນະຄອນຫຼວງ ແຕ່ງຕັ້ງຄະນະຮັບຜິດຊອບການຫັນເປັນດີຈີຕອນຂອງອົງການປົກຄອງຕົນເອງ ໂດຍກຳນົດເອົາ ເຈົ້າແຂວງ ຫຼື ເຈົ້າຄອງນະຄອນຫຼວງ ເປັນປະທານ, ຮອງເຈົ້າແຂວງ ຫຼື ຮອງເຈົ້າຄອງນະຄອງຫຼວງ ເປັນຮອງປະທານ ແລະ ປະກອບດ້ວຍຫົວໜ້າບັນດາ ພະແນກການທີ່ກ່ຽວຂ້ອງ ເປັນຄະນະ.

2.3 ຄະນະຮັບຜິດຊອບການຫັນເປັນດີຈີຕອນ ຂອງ ບັນດາກະຊວງ, ອົງການທຽບເທົ່າຢູ່ສູນກາງ ແລະ ບັນດາແຂວງ, ນະຄອນຫຼວງ, ລວມທັງ ບັນດາອົງການພັກ, ແນວລາວສ້າງຊາດ, ສະພາແຫ່ງຊາດ, ສະຫະ ພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ ແຕ່ງຕັ້ງຄະນະຊ່ວຍວຽກການຫັນເປັນດີຈີຕອນ ເມື່ອເຫັນວ່າມີຄວາມຈຳເປັນ ພ້ອມທັງກຳນົດພາລະບົດບາດ, ໜ້າທີ່, ຂອບເຂດສິດ ແລະ ຄວາມຮັບຜິດຊອບ ຂອງແຕ່ລະພາກສ່ວນ ຢ່າງຈະແຈ້ງ, ຮັດກຸມ, ຫຼີກເວັ້ນການເຮັດວຽກຊ້ຳຊ້ອນກັບພາກສ່ວນອື່ນ.

3. **ສິດ ແລະ ໜ້າທີ່ ຂອງ ຄະນະຊ່ວຍວຽກ ທີ່ລະບຸໃນ ໝວດທີ 3 ມາດຕາ 8**

ຄະນະຊ່ວຍວຽກ ເປັນເສນາທິການຊ່ວຍ ຄະນະກຳມະການລະດັບຊາດ ເພື່ອການຫັນເປັນດີຈີຕອນ ຂອງ ສປປ ລາວ ໃນການຄົ້ນຄວ້າ ແລະ ປະສານງານ ກ່ຽວກັບວຽກງານການຫັນເປັນດີຈີຕອນ ຂອງ ສປປ ລາວ;

ຄະນະຊ່ວຍວຽກ ສາມາດສະເໜີປັບປຸງກົງຈັກບຸກຄະລາກອນກອງເລຂາ ຄະນະກຳມະການລະດັບຊາດ ເພື່ອການຫັນເປັນດີຈີຕອນ ຂອງ ສປປ ລາວ ໃຫ້ແທດເໝາະກັບພາລະບົດບາດ ແລະ ໜ້າທີ່ ທີ່ໄດ້ຮັບມອບໝາຍ;

ຄະນະຊ່ວຍວຽກ ຄົ້ນຄວ້າຂຶ້ນແຜນວຽກ, ແຜນຄົນ ແລະ ແຜນງົບປະມານ, ສະຫຼຸບລາຍງານ ຄະນະກຳມະການລະດັບຊາດ ເພື່ອການຫັນເປັນດີຈີຕອນ ຂອງ ສປປ ລາວ ກ່ຽວກັບຜົນການຈັດຕັ້ງປະຕິບັດ ແລະ ຖອດຖອນບົດຮຽນ ໃນແຕ່ລະໄລຍະ;

ຄະນະຊ່ວຍວຽກ ຂຶ້ນແຜນໄປ ກວດກາ ຊຸກຍູ້ ການຈັດຕັ້ງປະຕິບັດວຽກງານການຫັນເປັນດີຈີຕອນ ຂອງບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ເພື່ອໃຫ້ວຽກງານດັ່ງກ່າວ ໄດ້ຮັບການຈັດຕັ້ງຜັນຂະຫຍາຍໃນລວງກວ້າງ ແລະ ມີຄວາມຄືບໜ້າ ຢ່າງເປັນປົກກະຕິ.

4. **ວັນດີຈີຕອນແຫ່ງຊາດ ທີ່ລະບຸໃນ ໝວດທີ 5 ມາດຕາ 12**

ວັນດີຈີຕອນແຫ່ງຊາດ ແມ່ນກຳນົດເອົາວັນທີ 10.01 (10 ມັງກອນ) ຂອງ ແຕ່ລະປີ ແລະ ໃຫ້ໄດ້ຈັດສະເຫຼີມສະຫຼອງວັນດັ່ງກ່າວ ດ້ວຍຮູບການທີ່ເໝາະສົມ ຢູ່ສູນກາງ ແລະ ທ້ອງຖິ່ນ ເພື່ອເປັນການປຸກລະດົມຂະບວນການຫັນເປັນດີຈີຕອນ ໃຫ້ທົ່ວສັງຄົມຮັບຮູ້, ເຂົ້າໃຈ ແລະ ປະກອບສ່ວນຢ່າງຕັ້ງໜ້າ.

## III. ການຈັດຕັ້ງປະຕິບັດ

1. ຄະນະກຳມະການລະດັບຊາດ ເພື່ອການຫັນເປັນດິຈິຕອນ ຂອງ ສປປ ລາວ, ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການຈັດຕັ້ງຂັ້ນສູນກາງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເຜີຍແຜ່, ເຊື່ອມຊຶມ, ແນະນຳ ແລະ ຄຸ້ມຄອງ ການຈັດຕັ້ງປະຕິບັດ ລັດຖະດຳລັດ ວ່າດ້ວຍ ການແຕ່ງຕັ້ງຄະນະກຳມະການລະດັບຊາດ ເພື່ອການຫັນເປັນດິຈິຕອນ ຂອງ ສປປ ລາວ ສະບັບເລກທີ 082/ປປທ, ລົງວັນທີ 02 ມິຖຸນາ 2023, ດຳລັດ ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ຄະນະກຳມະການລະດັບຊາດ ເພື່ອການຫັນເປັນດິຈິຕອນ ຂອງ ສປປ ລາວ ສະບັບເລກທີ 301/ນຍ, ລົງວັນທີ 31 ຕຸລາ 2023 ແລະ ຄຳແນະນຳສະບັບນີ້ ໃຫ້ມີປະສິດທິຜົນ.

2. ຄຳແນະນຳສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຄະນະກຳມະການລະດັບຊາດ**
**ເພື່ອການຫັນເປັນດິຈິຕອນ ຂອງ ສປປ ລາວ**
**ຮອງປະທານ-ຜູ້ປະຈຳການ**

ປະທານ

ບໍ່ວຽງຄຳ ວົງດາລາ